ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງໜ່ວຍພັກສຳນັກງານປົກປ້ອງເງິນຝາກ ໄດ້ສຳເລັດລົງຢ່າງຈົບງາມ



ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ **III** ຂອງໜ່ວຍພັກສຳນັກງານປົກປ້ອງເງິນຝາກ ໄດ້ເປີດຂຶ້ນໃນຕອນເຊົ້າຂອງວັນທີ **04 ພະຈິກ 2019** ທີ່ຫ້ອງປະຊຸມໃຫຍ່ຊັ້ນ **IV** ທະນາຄານແຫ່ງ ສປປ ລາວ, ໂດຍການເປັນປະທານຂອງ**ສະຫາຍນາງ ແສງດາວວີ ວົງຄຳຊາວ ເລຂາໜ່ວຍພັກສຳນັກງານປົກປ້ອງເງິນຝາກ;** ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ມີສະມາຊິກພັກທັງໝົດ **15** ສະຫາຍເຂົ້າຮ່ວມ, ພ້ອມນີ້ ຍັງມີບັນດາໜ່ວຍພັກ, ຄະນະພັກຮາກຖານ ແລະ **3** ອົງການຈັດຕັ້ງມະຫາຊົນຂອງທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມຢ່າງພ້ອມພຽງ. ກອງປະຊຸມໃຫຍ່ໃນຄັ້ງນີ້ເປັນກຽດຢ່າງສູງທີ່ໄດ້ຕ້ອນຮັບການເຂົ້າຮ່ວມຂອງ **ສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ; ເລຂາຄະນະພັກ ທະນາຄານແຫ່ງ ສປປ ລາວ;**



ໃນກອງປະຊຸມໄດ້ຄົ້ນຄວ້າຢ່າງເລິກເຊິ່ງ ແລະ ຮັບຮອງເອົາຮ່າງລາຍງານການເມືອງຂອງໜ່ວຍພັກສຳນັກງານປົກປ້ອງເງິນຝາກ ໂດຍສະເພາະແມ່ນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ໃນດ້ານຕ່າງໆຊຸມປີຜ່ານມາ ພ້ອມທັງໄດ້ກຳນົດທິດທາງແຜນການ ແລະ ຄາດໝາຍສູ້ຊົນຂອງໜ່ວຍພັກ ໃນ 5 ປີ ຕໍ່ໜ້າເຊິ່ງສະເໜີໂດຍ**ສະຫາຍນ. ດາວມະນີວອນ ວິໄລວຽງ** ກຳມະການໜ່ວຍພັກສຳນັກງານປົກປ້ອງເງິນຝາກ. ຫລັງຈາກນັ້ນ, ກອງປະຊຸມໄດ້ຮັບຟັງການຜ່ານບົດສຳຫຼວດການນຳພາລວມຂອງຄະນະໜ່ວຍພັກສຳນັກງານປົກປ້ອງເງິນຝາກທີ່ໄດ້ສະເໜີໂດຍ**ສະຫາຍ ຄຳໄຊ ພົມມະວົ** ຮອງເລຂາໜ່ວຍພັກສຳນັກງານປົກປ້ອງເງິນຝາກ ເຊິ່ງໄດ້ຕີລາຄາການນຳພາລວມຂອງຄະນະໜ່ວຍພັກສຳນັກງານປົກປ້ອງເງິນຝາກທີ່ຍາດໄດ້ຜົນສຳເລັດໃນຫຼາຍດ້ານເປັນຕົ້ນແມ່ນ:ໄດ້ຮັກສາຄວາມສາມັກຄີເປັນເອກະພາບພາຍໃນໜ່ວຍພັກສຳນັກງານປົກປ້ອງເງິນຝາກ ກໍຄືສະມາຊິກພັກ ຢ່າງແໜ້ນແຟ້ນ, ບົດຮຽນ ແລະ ຄວາມສາມາດຢ່າງມີຫົວຄິດປະດິດສ້າງໃນການນຳພາຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ຂອງຄະນະໜ່ວຍພັກ.



ຕົ້ນຕໍ ກອງປະຊຸມໃນຄັ້ງນີ້ ບັນດາສະຫາຍສະມາຊິກພັກ ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕຂອງຕົນຢ່າງເຕັມສ່ວນເລືອກຕັ້ງເອົາຄະນະໜ່ວຍພັກສຳນັກງານປົກປ້ອງເງິນຝາກ ສະໄໝທີ **III** ຈຳນວນ 03 ສະຫາຍ ຈາກ 05 ສະຫາຍ ເພື່ອສືບຕໍ່ເປັນແກນນຳ ໃນການຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ **III** ຂອງໜ່ວຍພັກພັກສຳນັກງານປົກປ້ອງເງິນຝາກ ໃຫ້ປະກົດຜົນເປັນຈິງກອງປະຊຸມໄດ້ເປັນເອກະສັນເລືອກເອົາ:

1. **ສະຫາຍນ. ແສງດາວວີ ວົງຄຳຊາວ ເປັນເລຂາ;**
2. **ສະຫາຍ ຄຳໄຊ ພົມມະວີ ເປັນຮອງເລຂາ; ພ້ອມທັງເປັນຜູ້ກວດກາໜ່ວຍພັກ**
3. **ສະຫາຍ ນ. ດາວມະນີວອນ ວິໄລວຽງ ເປັນກຳມະການ,**

ພ້ອມນີ້ ກອງປະຊຸມຍັງໄດ້ເລືອກຕັ້ງເອົາຜູ້ແທນ ຂອງໜ່ວຍພັກສຳນັກງານປົກປ້ອງເງິນຝາກ ໄປເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ **IV** ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ຈຳນວນ 4 ສະຫາຍ, ສຳຮອງ 1 ສະຫາຍ.

ກອງປະຊຸມໃຫຍ່ຄັ້ງນີ້ໄດ້ຮັບຟັງຄຳເຫັນໂອ້ລົມຂອງ **ສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ; ເລຂາຄະນະພັກ ທະນາຄານແຫ່ງ ສປປ ລາວ** ເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍ-ຊົມເຊີຍຕໍ່ຄະນະໜ່ວຍພັກສຳນັກງານປົກປ້ອງເງິນຝາກ ຊຸດເກົ່າ ທີ່ໄດ້ຊີ້ນຳ-ນຳພາ ສະມາຊິກພັກ-ພະນັກງານ ປະຕິບັດໜ້າທີ່ການເມືອງແລະ ຍາດໄດ້ຜົນງານໃນຫລາຍໆດ້ານ;ຄຽງຄູ່ກັນນັ້ນ, ສະຫາຍ ຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ດ້ານອ່ອນ-ຂໍ້ຄົງຄ້າງ, ຊຶ່ງໄດ້ຮຽກຮ້ອງໃຫ້ຄະນະໜ່ວຍພັກສຳນັກງານປົກປ້ອງເງິນຝາກ ຊຸດໃໝ່ ຕ້ອງຮີບຮ້ອນປັບປຸງແກ້ໄຂ; ພ້ອມກັນນັ້ນ, ຍັງມີທິດຊີ້ນຳໃນແຕ່ລະວຽກງານຢ່າງພາວະວິໄສ ແລະ ມີຈຸດສຸມ. ນອກຈາກນີ້, ສະຫາຍ ຍັງມີຄວາມເຊື່ອໝັ້ນວ່າ: ໃນຕໍ່ໜ້າ ຄະນະໜ່ວຍພັກສຳນັກງານປົກປ້ອງເງິນຝາກຊຸດໃໝ່ ຈະນຳພາຖັນແຖວສະມາຊິກພັກ-ພະນັກງານ ສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງຕົນ ໃຫ້ບັນລຸຜົນສຳເລັດແລະ ຍາດໄດ້ໝາກຜົນອັນໃໝ່ທີ່ຍິ່ງໃຫຍ່ກ່ວາເກົ່າ.




ກອງປະຊຸມ ຍັງໄດ້ຮຽກຮ້ອງມາຍັງສະມາຊິກພັກທັງໝົດ ພາຍໃນໜ່ວຍພັກສຳນັກງານປົກປ້ອງເງິນຝາກ ຈົ່ງພ້ອມກັນເຊີດຊູສະຕິປັນຍາ ແລະ ຄວາມຮັບຜິດຊອບ ເພື່ອເຮັດຫລ້ອນໜ້າທີ່ການເມືອງຂອງຕົນ ເຮັດໃຫ້ໜ່ວຍພັກຖືກຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**#ຂ່າວ-ພາບ ໂດຍ: ສຳນັກງານປົກປ້ອງເງິນຝາກ.**